ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1855 /ຫສນຍ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 17. 11. 2017

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 2715
ວັນທີ 21/11/17

ເລກທີ 2154
ວັນທີ 20.11.17

# ແຈ້ງການ

ຮຽນ : - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

- ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ. ✓
- ທ່ານລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

ເລື່ອງ: ຜົນການລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ໂຮງງານແຍກ ແລະ ຫຼອມສິ່ງເສດເຫຼືອ ອີເລັກໂຕນິກ ແລະ ໝໍ້ໄຟເກົ່າ ໃນທົ່ວປະເທດ.

- ອີງຕາມເອກະສານລາຍງານ ສະບັບເລກທີ 1194 /ອຄ.ກອຫ, ລົງວັນທີ 26 ກໍລະກົດ 2017 ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ.
- ອີງຕາມການຊີ້ນຳ ແລະ ຕົກລົງ ຂອງກອງປະຊຸມນາຍົກ- ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 8-9 ພະຈິກ 2017.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳ ແລະ ຕົກລົງ ຂອງກອງປະຊຸມນາຍົກ - ຮອງນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້ : 1). ມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ຄົ້ນຄ້ວາຄືນກ່ຽວກັບມາດຕະຖານ ແລະ ຄຸນນະພາບ ຂອງບັນດາໂຮງງານແຍກ ແລະ ຫລອມສິ່ງເສດເຫຼືອ ເຄື່ອງອີເລັກໂຕຼນິກ ແລະ ໝໍ້ໄຟເກົ່າ ໂດຍໃຫ້ໄດ້ຕາມມາດຖານ ແລະ ຄຸນນະພາບ ຂອງສາກົນ ພ້ອມກັນນັ້ນ, ກໍ່ໃຫ້ນຳໃຊ້ວັດຖຸດິບ ( ໝໍ້ໄຟເກົ່າ ແລະ ເຄື່ອງອີເລັກໂຕຼນິກ ) ທີ່ມີຢູ່ພາຍໃນປະເທດ ເທົ່ານັ້ນ.

2). ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບທ້ອງຖິ່ນທີ່ກ່ຽວຂ້ອງ ກວດກາຄືນໂຮງງານທັງໝົດ 13 ແຫ່ງ ຄື: ຖ້າໂຮງງານໃດ ທີ່ມີມາດຖານຄົບຖ້ວນ ແລະ ການດຳເນີນງານ ມີປະສິດທິພາບ ແມ່ນອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການ. ສ່ວນໂຮງງານໃດ ທີ່ຈະຕ້ອງໄດ້ມີການປັບປຸງຕາມເງື່ອນໄຂມາດຖານຂອງກະຊວງ ກຳນົດ ແມ່ນໃຫ້ຢຸດຕິການຜະລິດຊົ່ວຄາວໄວ້ກ່ອນ ຈົນກວ່າຈະມີການປັບປຸງໂຮງງານໃຫ້ສຳເລັດ ແລະ ໄດ້ມາດຕະຖານ ຈຶ່ງອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການ, ແຕ່ຖ້າບໍ່ສາມາດປັບປຸງຕາມມາດຕະ ຖານ ແມ່ນໃຫ້ຢຸດຕິການຜະລິດ ແລະ ຫັນໄປເຮັດກິດຈະການອື່ນແທນ. ສຳລັບ ໂຮງງານ ຄື: ໂຮງງານ ແອວຊີລີໄຊໂກລ ຢູ່ນະຄອນຫຼວງວຽງຈັນ ແລະ ໂຮງງານຫຼອມທອງ ເຄິ່ງສຳເລັດຮູບ ຢູ່ແຂວງຫຼວງນ້ຳທາ ທີ່ເຫັນວ່າສະຖານທີ່ບໍ່ເໝາະສົມຕໍ່ສະພາບແວດລ້ອມ ແລະ ຈັດຢູ່ໃນປະເພດ C ນັ້ນ ແມ່ນໃຫ້ຢຸດຕິການຜະລິດຢ່າງຖາວອນ ແລະ ບໍ່ອະນຸຍາດໃຫ້ຂະຫຍາຍໂຮງງານ ອີກຕື່ມ.

3). ມອບໃຫ້ກະຊວງວິທະຍາສາດ ແລະ ເທັກໂນໂລຊີ ອອກລະບຽບ ແລະ ກໍານົດມາດຕະຖານ ໂດຍອີງຕາມມາດຖານຂອງສາກົນ ເຊັ່ນ: ການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ, ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຫຼຸດຜ່ອນຜົນກະທົບຕໍ່ສຸຂະພາບຄົນ ໃຫ້ໜ້ອຍທີ່ສຸດ. ພ້ອມທັງ ອອກແຈ້ງເຊີນຜູ້ຊ່ຽວຊານຈາກຕ່າງປະເທດ ມາສຶກສາເບິ່ງ ໂດຍກໍານົດຜູ້ທີ່ມີປະສົບການ ແລະ ລົງເລິກກ່ຽວກັບບັນຫາດັ່ງກ່າວ, ໃນນີ້ ຕ້ອງບໍ່ແມ່ນຜູ້ມາຈາກ ອົງການ NGO.

4). ຫ້າມບໍ່ໃຫ້ນໍາເຂົ້າ ສິ່ງເສດເຫຼືອຈາກເຄື່ອງອີເລັກໂຕຼນິກ ແລະ ໝໍ້ໄຟເກົ່າຕ່າງໆ ຈາກຕ່າງປະເທດ ໃນທຸກຮູບການ ຢ່າງເດັດຂາດ. ມອບໃຫ້ກະຊວງການເງິນ ອອກແຈ້ງການເຖິງບັນດາດ່ານພາສີທົ່ວປະເທດ ປະຕິບັດຢ່າງເຂັ້ມງວດ ແລະ ເດັດຂາດ, ຖ້າພົບເຫັນ ແລະ ມີການຝ່າຝືນ ແມ່ນໃຫ້ດໍາເນີນມາດຕະການຕາມກົດໝາຍ ແລະ ລະບຽບການກໍານົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ບ່ອນນໍາສົ່ງ
- ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
- ນະຄອນຫຼວງວຽງຈັນ 01 ສະບັບ
- ແຂວງຫຼວງນໍ້າທາ 01 ສະບັບ
- ສໍາເນົາ 08 ສະບັບ

ເພັດ ພົມພິພັກ